ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

09-16 ສິງຫາ 2026
ປີທີ 15
ສະບັບທີ 1077

ສຳນັກງານຕັ້ງຢູ່ອາລາມຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

## ພິທີຊາປະນະກິດລະດັບຊາດ ສະຫາຍ ໄຊສົມພອນ ພົມວິຫານ



(ສພຊ) - ພິທີຊາປະນະກິດສົບລະດັບຊາດ ສະຫາຍ ໄຊສົມພອນພົມວິຫານກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ, ປະທານສະພາແຫ່ງຊາດ ໄດ້ຈັດຂຶ້ນຢ່າງສົມກຽດ ໃນວັນທີ 12 ສິງຫາ 2026ທີ່ເດີ່ນພະທາດຫຼວງ, ນະຄອນຫຼວງວຽງຈັນ ໂດຍມີພະເຖລານຸເຖລະ, ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານ

ອ່ານຕໍ່ໜ້າ 8




ພັກຖືລັດທິມາກ-ເລນິນ, ລັດທິຮັກຊາດອັນແທ້ຈິງ ສົມທົບກັບລັດທິສາກົນກຳມະຊີບ ເປັນພື້ນຖານແນວຄິດ ແລະ ເປັນເຂັມທິດ ສຳລັບການເຄື່ອນໄຫວທຸກປະການ, ສົມທົບທິດສະດີກັບພາກປະຕິບັດ ຢ່າງສະໜິດແໜ້ນ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 156)

ອ່ານຕໍ່ສະບັບໜ້າ

## ບົດສະດຸດີ ເຖິງສະຫາຍ ໄຊສົມພອນ ພົມວິຫານ

(ກ່າວໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ, ປະທານຄະນະຮັບຜິດຊອບງານຊາປະນະກິດລະດັບຊາດ; ເວລາ13:00 ໂມງ, ວັນທີ 12/8/2026, ທີ່ສະໜາມຫຼວງ, ນະຄອນຫຼວງວຽງຈັນ)



-ຂ້ານ້ອມນະມັດສະການພະເຖລາ ນຸເຖລະ;

-ຮຽນບັນດາທ່ານ, ບັນດາສະຫາຍການນຳ, ອະດີດການນຳ ພັກ-ລັດ ທີ່ນັບຖື;

- ບັນດາທ່ານ, ບັນດາສະຫາຍແຂກຕ່າງປະເທດ ທີ່ນັບຖື;

- ເພື່ອນມິດສະຫາຍທັງພາຍໃນແລະຕ່າງປະເທດ, ຍາດພີ່ນ້ອງ, ຄອບຄົວຂອງສະຫາຍ ໄຊສົມພອນ ພົມວິຫານ ທີ່ຮັກແພງທັງຫຼາຍ.

ໃນທ່າມກາງຄວາມໂສກເສົ້າເສຍດາຍ ແລະ ອາໄລອາວອນຢ່າງສຸດຊຶ້ງຕໍ່ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ມື້ນີ້, ຄະນະບໍລິຫານງານສູນກາງພັກ, ສະພາແຫ່ງຊາດ, ລັດຖະບານ ແຫ່ງ ສປປລາວ, ສູນກາງແນວລາວສ້າງຊາດ, ຄອບຄົວພົມວິຫານ ຮ່ວມກັບບັນດາອົງການຈັດຕັ້ງໃນລະບົບການເມືອງຂັ້ນສູນກາງ ແລະທ້ອງຖິ່ນກໍຄືຊາວນະຄອນຫຼວງວຽງຈັນ ໄດ້ຈັດຕັ້ງພິທີຊາ

ອ່ານຕໍ່ໜ້າ 6







## ການນຳຂັ້ນສູງພັກ-ລັດ ແລະ ພາກສ່ວນຕ່າງໆ ເຂົ້າວາງພວງມາລາ ໄວ້ອາໄລຕໍ່ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ



(ສພຊ) - ວັນທີ 9 ສິງຫາ2026ທີ່ຫໍປະຊຸມແຫ່ງຊາດ, ການນຳຂັ້ນສູງຂອງພັກ-ລັດ, ບັນດາອົງການ, ກະຊວງ, ສຳນັກງານ, ຄອບຄົວການນຳ, ອະດີດການນຳ ແລະ ພາກສ່ວນຕ່າງໆ ໄດ້ພ້ອມກັນເຂົ້າວາງພວງມາລາ ແລະ ໄວ້ ອາໄລຕໍ່ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ການວາງພວງມາລາຄັ້ງນີ້ ເປັນການສະແດງເຖິງຄວາມກະຕັນຍູ, ຮູ້ບຸນຄຸນ ແລະ ຄວາມເຄົາລົບຮັກທີ່ມີຕໍ່ສະຫາຍ ໄຊສົມພອນ ພົມວິຫານຜູ້ໄດ້ອຸທິດເຫື່ອແຮງ, ສະຕິປັນຍາ ແລະ ກຳລັງກາຍ-ກຳລັງໃຈເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ໂດຍສະເພາະໃນຂົງເຂດນິຕິບັນຍັດ ແລະ ສະພາແຫ່ງຊາດ.

ຄະນະທຳອິດທີ່ເຂົ້າວາງພວງມາລາແມ່ນຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ນຳໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ. ລຳດັບຈາກນັ້ນແມ່ນຄອບຄົວສະຫາຍທອງລຸນ ສີສຸລິດ; ຄະນະປະຈຳສະພາແຫ່ງຊາດ ນຳໂດຍທ່ານ ນາງ ສູນທອນ ໄຊຍະຈັກ ຄະນະເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ຄະນະລັດຖະບານ ນຳໂດຍສະຫາຍ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ; ຄະນະຄອບຄົວ

ອ່ານຕໍ່ໜ້າ 6

## ການນຳພັກ-ລັດ ໃສ່ບາດຖວາຍສັງຄະທານ ອຸທິດເຖິງສະຫາຍ ໄຊສົມພອນ ພົມວິຫານ



ອ່ານຕໍ່ໜ້າ 7

**ຊົມເຊີຍວັນສ້າງຕັ້ງແນວລາວສ້າງຊາດ, ວັນສື່ມວນຊົນແຫ່ງຊາດ ແລະ ການພິມຈຳໜ່າຍ ຄົບຮອບ 76 ປີ ຢ່າງສຸດໃຈ!**

# ແຈ້ງຂ່າວພິເສດ ຂອງຄະນະບໍລິຫານງານສູນກາງພັກ

ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ສະພາແຫ່ງຊາດ, ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສູນກາງແນວລາວສ້າງຊາດ ແລະ ຄອບຄົວພົມວິຫານຂໍແຈ້ງຂ່າວໂສກເສົ້າສະຫຼົດໃຈ ມາຍັງພີ່ນ້ອງຮ່ວມຊາດ, ພະນັກງານ, ສະມາຊິກພັກ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນທົ່ວປະເທດ ແລະ ເພື່ອນມິດທີ່ຢູ່ໃກ້ ແລະ ໄກ ຊາບຢ່າງທົ່ວເຖິງກັນວ່າ: ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ເຖິງແກ່ມໍລະນະກຳ ໃນເວລາ 11:18 ໂມງ ຂອງວັນທີ 8 ສິງຫາ 2026 ດ້ວຍພະຍາດເສັ້ນເລືອດອັກເສບທີ່ຮ້າຍແຮງ,ລວມອາຍຸໄດ້ 70 ປີ.

ສະຫາຍ ໄຊສົມພອນ ພົມວິຫານ ແມ່ນໜຶ່ງໃນການນຳຫຼັກແຫຼ່ງຂອງສູນກາງພັກ, ເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີພິບໄຫວ, ເປັນຜູ້ມີປະສົບການຜ່ານການເປັນການນຳຢູ່ທ້ອງຖິ່ນ ແລະ ຫຼາຍຂະແໜງການ; ເປັນຜູ້ນຳທີ່ມີຜົນງານໂດດເດັ່ນ, ຕະຫຼອດຊີວິດຂອງເພິ່ນ ໄດ້ອຸທິດສະຕິປັນຍາ, ກຳລັງວັງຊາເພື່ອພາລະກິດປະຕິວັດຂອງພັກເຮົາ ເພື່ອການພັດທະນາປະເທດຊາດ ແລະ ຄວາມຢູ່ດີກິນດີ ຂອງປະຊາຊົນລາວບັນດາເຜົ່າ.

ການຈາກໄປໂດຍບໍ່ມີວັນຈະກັບຄືນມາ ຂອງສະຫາຍ ໄຊສົມພອນ ພົມວິຫານ ເປັນການສູນເສຍອັນໃຫຍ່ຫຼວງ ສຳລັບພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ.

ໃນເວລາແຫ່ງຄວາມໂສກເສົ້າເສຍໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງນີ້, ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ, ພະນັກງານ, ສະມາຊິກພັກ ແລະ ທົ່ວປວງຊົນລາວທັງຊາດ ຈົ່ງເອົາຄວາມໂສກເສົ້າສະຫຼົດໃຈ ແລະ ຄວາມອາໄລຮັກ ຕໍ່ສະຫາຍ ໄຊສົມພອນ ພົມວິຫານ ໃຫ້ກາຍເປັນກຳລັງແຮງ,ສາມັກຄີກັນເປັນປຶກແຜ່ນແໜ້ນໜາອ້ອມຂ້າງຄະນະບໍລິຫານງານສູນກາງພັກ,ເສີມຂະຫຍາຍມູນເຊື້ອອັນສະຫງ່າອົງອາດ ຂອງຊາດ ແລະ ຂອງພັກ, ເດັດດ່ຽວຜັນຂະຫຍາຍແນວທາງປ່ຽນແປງໃໝ່ຂອງພັກ ເຂົ້າສູ່ລວງເລິກ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນຕາມຈຸດໝາຍສັງຄົມນິຍົມ.

ເພື່ອເປັນການສັນລະເສີນຄຸນງາມຄວາມດີ ແລະ ສະແດງຄວາມອາໄລຮັກຢ່າງສຸດຊຶ້ງຕໍ່ສະຫາຍ ໄຊສົມພອນ ພົມວິຫານ, ຄະນະບໍລິຫານງານສູນກາງພັກ, ສະພາແຫ່ງຊາດ, ລັດຖະບານ ແຫ່ງ ສປປລາວ ແລະ ສູນກາງແນວລາວສ້າງຊາດຕົກລົງໄວ້ທຸກລະດັບຊາດ ເປັນເວລາ 5 ວັນ, ໂດຍເລີ່ມແຕ່ວັນທີ 9 ເຖິງວັນທີ 13 ສິງຫາ 2026 ທີ່ຫໍປະຊຸມແຫ່ງຊາດ, ພິທີສົ່ງສະການຢ່າງເປັນທາງການ ຈະໄດ້ຈັດຂຶ້ນໃນວັນທີ 12 ສິງຫາ 2026, ທີ່ສະໜາມຫຼວງ.

- ຄະນະບໍລິຫານງານສູນກາງພັກ
- ສະພາແຫ່ງຊາດ
- ລັດຖະບານ ແຫ່ງ ສປປລາວ
- ສູນກາງແນວລາວສ້າງຊາດ
- ຄອບຄົວ ພົມວິຫານ

# ປະທານສະພາແຫ່ງຊາດຫວຽດນາມ ວາງພວງມາລາໄວ້ອາໄລຕໍ່ການຈາກໄປ ຂອງສະຫາຍ ໄຊສົມພອນ ພົມວິຫານ



(ສພຊ) - ວັນທີ 9 ສິງຫາ 2026, ສະຫາຍ ເຈິ່ນ ແທັງເໝິ້ນ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງພັກ, ລັດ ແຫ່ງ ສສ.ຫວຽດນາມ ໄດ້ເຂົ້າວາງພວງມາລາ ແລະ ໄວ້ອາໄລ ຕໍ່ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ, ປະທານສະພາແຫ່ງຊາດ ທີ່ໄດ້ເຖິງແກ່ມໍລະນະກຳໃນວັນທີ 8 ສິງຫາຜ່ານມາ; ການເຂົ້າວາງພວງມາລາ ແລະ ໄວ້ອາໄລ ໃນຄັ້ງນີ້ ເປັນການສະແດງເຖິງຄວາມເຄົາລົບຮັກ ແລະ ຄວາມອາໄລອາວອນ ຂອງພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ຕໍ່ການຈາກໄປຂອງຜູ້ນຳທີ່ສຳຄັນຂອງ ສປປລາວ, ພ້ອມທັງສະທ້ອນໃຫ້ເຫັນເຖິງສາຍພົວພັນມິດຕະພາບ, ຄວາມສາມັກຄີ ແລະ ມິດຕະພາບອັນແໜ້ນແຟ້ນ ລະຫວ່າງພັກ, ລັດ ແລະ ປະຊາຊົນ ລາວ-ຫວຽດນາມ.

ໂອກາດດຽວກັນນີ້, ສະຫາຍ ພົທ. ເລ ວັນ ຕຽນ ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ສະຫາຍ ພົທ. ຫງວຽນ ເຈື່ອງຖັງ ຮອງລັດຖະມົນຕີກະຊວງປ້ອງກັນປະເທດຫວຽດນາມ ພ້ອມດ້ວຍຄະນະ ກໍໄດ້ເຂົ້າວາງພວງມາລາ ແລະ ໄວ້ອາໄລ ຕໍ່ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ເຊັ່ນດຽວກັນ.

# ຊີວະປະຫວັດຫຍໍ້ຂອງສະຫາຍ ໄຊສົມພອນ ພົມວິຫານ




- ວັນ, ເດືອນ, ປີ ເກີດ: 12 ທັນວາ 1956;
- ເກີດທີ່: ບ້ານນາແມວ, ເມືອງວຽງໄຊ, ແຂວງຫົວພັນ;
- ຊົນເຜົ່າ: ລາວ, ສາສະໜາ: ພຸດ;
- ປັດຈຸບັນຢູ່: ບ້ານສີບຸນເຮືອງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ;
- ຊັ້ນຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ: ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ຊຸດທີ X.
-ລະດັບການສຶກສາສາມັນ: ມັດທະຍົມສຶກສາຕອນປາຍ, ລະດັບວິຊາສະເພາະ: ປະລິນຍາເອກ ສາຂາວິຊາ: ເສດຖະສາດການເມືອງ, ລະດັບທິດສະດີການເມືອງ: ຂັ້ນສູງ;
- ວັນ, ເດືອນ, ປີ ເຂົ້າສັງກັດລັດ: 1975; ວັນ, ເດືອນ, ປີ ເຂົ້າພັກສົມບູນ: 01 ກັນຍາ 1984.

-ການເຄື່ອນໄຫວໂດຍຫຍໍ້ໃນແຕ່ລະໄລຍະ:

- 1977-1983 ສຶກສາຢູ່ມະຫາວິທະຍາໄລແຫ່ງລັດ ມົດສະກູ, ສະຫະພາບໂຊວຽດ (ສະຫະພັນລັດເຊຍ ໃນປັດຈຸບັນ);
- 1983-1984 ອາຈານສອນຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ນະຄອນຫຼວງວຽງຈັນ;
- 1984-1987 ຄົ້ນຄວ້າ ແລະ ປ້ອງກັນສຳເລັດປະລິນຍາເອກ ຝ່າຍເສດຖະສາດການເມືອງ ທີ່ສະພາບັນດິດວິທະຍາສາດສັງຄົມແຫ່ງລັດ ມົດສະກູ, ສະຫະພາບໂຊວຽດ (ສະຫະພັນລັດເຊຍ ໃນປັດຈຸບັນ);
- 1987-1989 ເຮັດວຽກຢູ່ຫ້ອງວ່າການແຂວງສະຫວັນນະເຂດ;
- 1989-1991 ຮອງເຈົ້າແຂວງສະຫວັນນະເຂດ ທັງເປັນຫົວໜ້າພະແນກການຄ້າ ແລະ ພົວພັນເສດຖະກິດກັບຕ່າງປະເທດ;
- 1991-1993 ກຳມະການສູນກາງພັກ ສະໄໝທີ V, ຮອງເລຂາຄະນະພັກ, ຮອງເຈົ້າແຂວງ ທັງເປັນຫົວໜ້າຫ້ອງວ່າການແຂວງສະຫວັນນະເຂດ;
- 1993-1995 ເລຂາພັກແຂວງ, ເຈົ້າແຂວງສະຫວັນນະເຂດ;
- 1995-1997 ກຳມະການສູນກາງພັກ ສະໄໝທີ VI, ລັດຖະມົນຕີວ່າການກະຊວງການເງິນ;
- 1998-2001 ສະມາຊິກສະພາແຫ່ງຊາດ ຊຸດທີ IV, ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- 2001-2006 ກຳມະການສູນກາງພັກ ສະໄໝທີ VII, ປະທານກຳມາທິການການຕ່າງປະເທດ ຂອງສະພາແຫ່ງຊາດ ຊຸດທີ V, ຮອງປະທານລັດຖະສະພາສາກົນ ແຫ່ງ ສປປລາວ;
- 2006-2010 ກຳມະການສູນກາງພັກ ສະໄໝທີ VIII, ເລຂາຄະນະພັກ, ຮອງປະທານສະພາແຫ່ງຊາດ ຊຸດທີ VI ທັງເປັນປະທານກຳມາທິການການຕ່າງປະເທດ;
- 2011-2015 ກຳມະການສູນກາງພັກ ສະໄໝທີ IX, ເລຂາຄະນະພັກ, ຮອງປະທານສະພາແຫ່ງຊາດ ຊຸດທີ VII;
- ເດືອນ 1-4/2016 ກຳມະການສູນກາງພັກ ແລະ ກຳມະການກົມການເມືອງສູນກາງພັກ ສະໄໝທີ X, ເລຂາຄະນະພັກ, ຮອງປະທານສະພາແຫ່ງຊາດ ຊຸດທີ VIII;
- ເດືອນ 6/2016-2020 ກຳມະການສູນກາງພັກ ແລະ ກຳມະການກົມການເມືອງສູນກາງພັກ ສະໄໝທີ X, ເລຂາຄະນະພັກ, ປະທານສູນກາງແນວລາວສ້າງຊາດ, ສະມາຊິກສະພາແຫ່ງຊາດ ຊຸດທີ VIII;
- ເດືອນ 1-3/2021 ກຳມະການສູນກາງພັກ ແລະ ກຳມະການກົມການເມືອງສູນກາງພັກ ສະໄໝທີ XI, ສະມາຊິກສະພາແຫ່ງຊາດ ຊຸດທີ VIII;
- ເດືອນ 3/2021-12/2025 ກຳມະການສູນກາງພັກ ແລະ ກຳມະການກົມການເມືອງສູນກາງພັກ ສະໄໝທີ XI, ເລຂາຄະນະພັກ, ປະທານສະພາແຫ່ງຊາດ ຊຸດທີ IX;
- ເດືອນ 1/2026 ກຳມະການສູນກາງພັກ ແລະ ກຳມະການກົມການເມືອງສູນກາງພັກ ສະໄໝທີ XII, ເລຂາຄະນະພັກ, ປະທານສະພາແຫ່ງຊາດ ຊຸດທີ IX;
- ເດືອນ 3/2026-ປັດຈຸບັນ ກຳມະການສູນກາງພັກ ແລະ ກຳມະການກົມການເມືອງສູນກາງພັກ ສະໄໝທີ XII, ເລຂາຄະນະພັກ, ປະທານສະພາແຫ່ງຊາດ ຊຸດທີ X.

# ເລຂາທິການໃຫຍ່ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ເຈິ່ນ ແທັງ ເໝິ້ນ



(ສພຊ) - ວັນທີ 9 ສິງຫາ 2026 ທີ່ຫ້ອງວ່າການສູນກາງພັກ, ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ເຈິ່ນ ແທັງ ເໝິ້ນ ກໍາມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງພັກ, ລັດ ສສ.ຫວຽດນາມ ໃນໂອກາດເດີນທາງມາວາງພວງມາລາ ແລະ ໄວ້ອາໄລເຖິງດວງວິນຍານຂອງສະຫາຍ ໄຊສົມພອນ ພົມວິຫານ ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ທີ່ໄດ້ເຖິງແກ່ມໍລະນະກໍາໃນວັນທີ 8 ສິງຫາ 2026.

ສະຫາຍ ທອງລຸນ ສີສຸລິດ ໄດ້ຕາງໜ້າໃຫ້ຄະນະບໍລິຫານງານສູນກາງພັກ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແຫ່ງ ສປປລາວ, ສູນກາງແນວລາວສ້າງຊາດ ແລະ ຄອບຄົວຂອງສະຫາຍ ໄຊສົມພອນພົມວິຫານສະແດງຄວາມຊາບຊຶ້ງແລະຂອບໃຈຕໍ່ສະຫາຍ ເຈິ່ນ ແທັງ ເໝິ້ນ ທີ່ໄດ້ນໍາພາຄະນະຜູ້ແທນຂັ້ນສູງພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງເດີນທາງມາຮ່ວມພິທີວາງພວງມາລາ ແລະ ໄວ້ອາໄລເຖິງດວງວິນຍານຂອງສະຫາຍ ໄຊສົມພອນ ພົມວິຫານ ເຊິ່ງເປັນການບົ່ງບອກຄວາມເສົ້າໂສກເສຍດາຍຂອງພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ແລະ ທັງເປັນການສະແດງໃຫ້ເຫັນນໍ້າໃຈແຫ່ງສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດອັນສະເໝີຕົ້ນສະເໝີປາຍ ລະຫວ່າງສອງພັກ, ສອງລັດ ລາວ-ຫວຽດນາມ ເຊິ່ງຍາມໃດການນໍາຂອງສອງພັກ, ສອງລັດ ກໍໄດ້ຢັ້ງຢືນວ່າ ຄວາມສາມັກຄີ, ການຮ່ວມມື, ການສະໜັບສະໜູນຊ່ວຍເຫຼືອເຊິ່ງກັນແລະກັນຂອງສອງປະເທດ ລາວ-ຫວຽດນາມ ນັ້ນແມ່ນເປັນກົດເກນພາວະວິໄສ, ເປັນປັດໄຈທີ່ມີຄວາມໝາຍຕັດສິນໄຊຊະນະພາລະກິດປະຕິວັດຂອງແຕ່ລະພັກ, ແຕ່ລະປະເທດ, ເຖິງວ່າສະພາບການຂອງໂລກຈະຜັນແປໄປຢ່າງສັບສົນກໍຕາມ ແຕ່ສອງປະເທດຍັງຕັດສິນໃຈຮ່ວມກັນປົກປັກຮັກສາ ແລະ ເສີມຂະຫຍາຍສາຍພົວພັນພິເສດ, ບໍລິສຸດຜຸດຜ່ອງ, ໃສແຈ້ງ ແລະ ຫາຍາກ ໃຫ້ນັບມື້ພັດທະນາເຂົ້າສູ່ລວງເລິກໃນທຸກຂົງເຂດວຽກງານ.

ສະຫາຍ ທອງລຸນ ສີສຸລິດ ຕີລາຄາວ່າ ສະຫາຍ ໄຊສົມພອນ ພົມວິຫານ ເປັນໜຶ່ງໃນບັນດາສະຫາຍການນໍາຫຼັກແຫຼ່ງຂອງພັກປະຊາຊົນປະຕິວັດລາວທີ່ມີຄວາມຮູ້ຄວາມສາມາດ ແລະ ເປັນແກນນໍາຂອງສູນກາງພັກໃນການນໍາພາ-ຊີ້ນໍາການປະຕິວັດໃນເມື່ອກ່ອນ ແລະ ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ກໍຄືເປັນຜູ້ນໍາໜ້າໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ; ເປັນນັກປະຕິວັດທີ່ມີນໍ້າໃຈຮັກຊາດອັນສູງສົ່ງ ແລະ ເປັນຜູ້ນໍາທີ່ດີເດັ່ນຂອງພັກ, ຂອງຊາດ; ຕະຫຼອດຊີວິດຂອງສະຫາຍ ໄດ້ອຸທິດສະຕິປັນຍາ ແລະ ເຫື່ອແຮງເພື່ອພາລະກິດປະຕິວັດ, ເພື່ອການພັດທະນາປະເທດຊາດແລະຄວາມຢູ່ດີກິນດີໃຫ້ແກ່ປະຊາຊົນລາວບັນດາເຜົ່າ. ໃນຍາມຍັງມີຊີວິດ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ເອົາໃຈໃສ່ເປັນພິເສດໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະ ພາບອັນຍິ່ງໃຫຍ່ລາວ-ຫວຽດນາມ, ຖືເປັນບຸລິມະສິດອັນດັບຕົ້ນໃນແນວທາງການຕ່າງປະເທດຂອງຕົນ, ມີຄວາມຮັກແພງສະໜິດສະໜົມກັບຜູ້ນໍາພັກ, ລັດ ຫວຽດນາມ ແລະ ຢືນຢັນວ່າ ໃນທ່າມກາງຄວາມໂສກເສົ້າເສຍໃຈແລະອາໄລອາວອນຢ່າງສຸດຊຶ້ງນີ້ທົ່ວພັກ, ທົ່ວລັດ, ທົ່ວກໍາລັງປະກອບອາວຸດ, ພະນັກງານ, ສະມາຊິກພັກ ແລະ ທົ່ວປວງຊົນລາວທັງຊາດຈະຫັນຄວາມເສົ້າສະຫຼົດໃຈແລະຄວາມອາໄລຮັກຕໍ່ສະຫາຍ ໄຊສົມພອນ ພົມວິຫານ ໃຫ້ກາຍເປັນການກະທໍາຕົວຈິງ, ສາມັກຄີເປັນປຶກແຜ່ນແໜ້ນໜາອ້ອມຂ້າງຄະນະບໍລິຫານງານສູນກາງພັກ, ເສີມຂະຫຍາຍມູນເຊື້ອອັນສະຫງ່າອົງອາດຂອງຊາດ ແລະ ຂອງພັກ, ເດັດດ່ຽວໜຽວແໜ້ນຜັນຂະຫຍາຍແນວທາງປ່ຽນແປງໃໝ່ຂອງພັກສູ່ລວງເລິກ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນຕາມຈຸດໝາຍສັງຄົມນິຍົມ.

ສະຫາຍ ເຈິ່ນ ແທັງ ເໝິ້ນ ໄດ້ຕາງໜ້າສູນກາງພັກ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແລະ ແນວໂຮມປະເທດຊາດຫວຽດນາມ ສະແດງຄວາມເສົ້າສະຫຼົດໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງ ຕໍ່ການເຖິງແກ່ມໍລະນະກໍາຂອງສະຫາຍ ໄຊສົມພອນ ພົມວິຫານ; ພ້ອມທັງໄດ້ຕີລາຄາວ່າ ສະຫາຍ ໄຊສົມພອນພົມວິຫານແມ່ນການນໍາຫຼັກແຫຼ່ງຂອງສູນກາງພັກປະຊາຊົນປະຕິວັດລາວ, ເປັນຜູ້ນໍາທີ່ແສນເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ, ຕະຫຼອດຊີວິດໄດ້ເສຍສະຫຼະສູ້ຊົນເພື່ອຄວາມເປັນເອກະລາດຂອງຊົນຊາດ, ສິດເສລີພາບ, ຄວາມຜາສຸກຂອງປະຊາຊົນ ແລະ ການພັດທະນາຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດ. ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ບໍ່ພຽງແຕ່ເປັນການສູນເສຍອັນໃຫຍ່ຫຼວງສໍາລັບພັກ, ລັດ, ປະຊາຊົນລາວ ແລະ ຄອບຄົວຂອງສະຫາຍ, ແຕ່ຫາກຍັງເປັນການສູນເສຍຜູ້ເປັນເພື່ອນມິດທີ່ຍິ່ງໃຫຍ່, ສະຫາຍອ້າຍນ້ອງທີ່ສະໜິດສະໜົມທີ່ສຸດຂອງພັກ, ລັດ ແລະ ປະຊາຊົນຫວຽດນາມ. ສະຫາຍ ໄຊສົມພອນ ພົມວິຫານ ຍາມໃດກໍສະໜັບສະໜູນຕໍ່ພາລະກິດສ້າງສາ ແລະ ປົກປັກຮັກສາປະເທດຊາດຂອງປະຊາຊົນຫວຽດນາມ ແລະ ໄດ້ມີການປະກອບສ່ວນສໍາຄັນຫຼວງຫຼາຍໃນການສ້າງສາ, ຮັດແໜ້ນ ແລະ ພັດທະນາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ, ການຮ່ວມມືຮອບດ້ານແລະຫຸ້ນສ່ວນຍຸດທະສາດ ຫວຽດນາມ-ລາວ; ຕີລາຄາສູງຕໍ່ບັນດາການອຸທິດອັນໃຫຍ່ຫຼວງຂອງສະຫາຍໃນພາລະກິດການປະຕິວັດໃນເມື່ອກ່ອນ ກໍຄືໃນພາລະກິດປ່ຽນແປງໃໝ່, ປົກປັກຮັກສາ, ສ້າງສາ ແລະ ພັດທະນາຊາດຂອງ ສປປລາວ ໃນປັດຈຸບັນ. ພັກ, ລັດ ແລະ ປະຊາຊົນຫວຽດນາມ ຂໍແບ່ງເບົາຄວາມເສົ້າສະຫຼົດໃຈອັນສຸດຊຶ້ງ ແລະ ແບ່ງປັນຄວາມທຸກໂສກທີ່ສຸດ ມາຍັງພັກ, ລັດ, ສູນກາງແນວລາວສ້າງຊາດ, ປະຊາຊົນລາວແລະຄອບຄົວຂອງສະຫາຍ ໄຊສົມພອນ ພົມວິຫານ ແລະ ເຊື່ອໝັ້ນວ່າ ພັກ, ລັດ, ປະຊາຊົນລາວອ້າຍນ້ອງ ແລະ ຄອບຄົວຂອງສະຫາຍ ໄຊສົມພອນ ພົມວິຫານ ຈະຜ່ານຜ່າຄວາມທຸກໂສກເສຍດາຍອັນໃຫຍ່ຫຼວງນີ້ໂດຍໄວ ແລະ ສືບຕໍ່ພາລະກິດສ້າງສາປະເທດລາວໃຫ້ນັບມື້ພັດທະນາຈະເລີນຮຸ່ງເຮືອງ.

ສອງສະຫາຍການນໍາຂອງສອງພັກ, ສອງລັດ ຕ່າງກໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຢ່າງສູງ ຕໍ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ໃນການສະໜັບສະໜູນ, ຊ່ວຍເຫຼືອອັນລໍ້າຄ່າ, ທັນການ ແລະມີປະສິດທິຜົນຕໍ່ພາລະກິດຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍຄືໃນພາລະກິດປົກປັກຮັກສາ ແລະ ພັດທະນາຂອງແຕ່ລະປະເທດໃນປັດຈຸບັນ; ພ້ອມກັນຕີລາຄາສູງຕໍ່ໝາກຜົນຂອງການຮ່ວມມືລະຫວ່າງສອງພັກ, ສອງລັດ ໃນໄລຍະຜ່ານມາ ສືບຕໍ່ໄດ້ຮັບການເພີ່ມທະວີ ແລະ ພັດທະນາກ້າວເຂົ້າສູ່ລວງເລິກໃນທຸກຂົງເຂດວຽກງານ ແລະ ຢືນຢັນວ່າ ສອງຝ່າຍຈະສືບຕໍ່ປົກປັກຮັກສາແລະເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ໃຫ້ນັບມື້ສວຍສົດງົດງາມ, ແຕກດອກອອກຜົນ ແລະ ໝັ້ນຄົງຂະໜົງແກ່ນຕະຫຼອດກາລະນານ.

# ສານເສົ້າສະຫຼົດໃຈຈາກການນໍາສສ.ຫວຽດນາມ

(ສພຊ) - ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແລະ ຄະນະກໍາມະການສູນກາງແນວໂຮມປະເທດຊາດຫວຽດນາມ ໄດ້ສົ່ງສານເສົ້າສະຫຼົດໃຈມາຍັງຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ (ພັກປປລາວ), ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ, ສູນກາງແນວລາວສ້າງຊາດ ແຫ່ງ ສປປລາວ ຕໍ່ການມໍລະນະກໍາຂອງສະຫາຍ ໄຊສົມພອນ ພົມວິຫານ ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ເຊິ່ງມີເນື້ອໃນດັ່ງນີ້:

ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ, ຄະນະກໍາມະການສູນກາງແນວໂຮມປະເທດຊາດຫວຽດນາມ ແລະ ປະຊາຊົນຫວຽດນາມຂໍສະແດງຄວາມເສົ້າສະຫຼົດໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງ ເມື່ອໄດ້ຮັບຂ່າວສະຫາຍ ໄຊສົມພອນ ພົມວິຫານ ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ເຖິງແກ່ມໍລະນະກໍາໃນວັນທີ 8 ສິງຫາ 2026.

ສະຫາຍ ໄຊສົມພອນ ພົມວິຫານເປັນຜູ້ນໍາທີ່ໂດດເດັ່ນຂອງພັກ, ລັດ ແລະ ປະຊາຊົນລາວ, ເປັນນັກກອມມູນິດທີ່ຈິງຮັກພັກດີ ແລະ ໄດ້ອຸທິດຊີວິດທັງໝົດຂອງຕົນ ໃຫ້ແກ່ພາລະກິດການປະຕິວັດຂອງພັກປະຊາຊົນປະຕິວັດລາວ, ໃຫ້ພາລະກິດການປົກປັກຮັກສາ, ສ້າງສາ ແລະການພັດທະນາປະເທດລາວທີ່ມີສັນຕິພາບ, ເອກະລາດ, ເອກະພາບ ແລະ ຈະເລີນຮຸ່ງເຮືອງ. ໃນຖານະຕໍາແໜ່ງທີ່ເປັນປະທານສະພາແຫ່ງຊາດ ແລະ ໃນບົດບາດສໍາຄັນອື່ນໆຈໍານວນໜຶ່ງຂອງພັກ ແລະ ລັດ, ສະຫາຍໄດ້ມີການປະກອບສ່ວນອັນສໍາຄັນເຂົ້າໃນການປັບປຸງລະບຽບກົດໝາຍໃຫ້ສົມບູນແບບ, ເສີມຂະຫຍາຍປະສິດທິພາບ ແລະ ກົດໝາຍໃຫ້ສົມບູນແບບ, ເສີມຂະຫຍາຍປະສິດທິພາບ ແລະ ປະສິດທິຜົນຂອງສະພາແຫ່ງຊາດລາວ, ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ, ເສີມສ້າງຄວາມສາມັກຄີພາຍໃນຊາດ ແລະ ຍົກສູງຖານະຂອງລາວໃນເວທີສາກົນ.

ສະຫາຍ ໄຊສົມພອນ ພົມວິຫານ ເປັນສະຫາຍ ແລະ ເພື່ອນທີ່ຍິ່ງໃຫຍ່ຜູ້ສະໜິດສະໜົມຂອງພັກ, ລັດ ແລະ ປະຊາຊົນຫວຽດນາມ, ຍາມໃດກໍມີຈິດໃຈຄວາມຮັກແພງອັນເລິກເຊິ່ງ ແລະ ຄວາມເປັນຫ່ວງເປັນໃຍເປັນພິເສດຕໍ່ການປົກປັກຮັກສາ, ເພີ່ມພູນຄູນສ້າງ ແລະ ພັດທະນາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດຫວຽດນາມ ແລະ ລາວ.

ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ເປັນການສູນເສຍອັນໃຫຍ່ຫຼວງຕໍ່ພັກ, ລັດ ແລະ ປະຊາຊົນລາວອ້າຍນ້ອງ ແລະ ໃນເວລາດຽວກັນ, ພັກ, ລັດ ແລະ ປະຊາຊົນຫວຽດນາມ ກໍໄດ້ສູນເສຍເພື່ອນທີ່ຍິ່ງໃຫຍ່, ຜູ້ເປັນສະຫາຍທີ່ຈິງຮັກພັກດີແລະສະໜິດສະໜົມ.

ພວກຂ້າພະເຈົ້າເຊື່ອໝັ້ນວ່າ ພັກ, ລັດ ແລະ ປະຊາຊົນລາວອ້າຍນ້ອງ ແລະ ຄອບຄົວຂອງສະຫາຍ ໄຊສົມພອນ ພົມວິຫານ ຈະຜ່ານຜ່າຄວາມທຸກໂສກເສຍດາຍ, ການສູນເສຍອັນໃຫຍ່ຫຼວງນີ້ໂດຍໄວ ແລະ ສືບຕໍ່ພາລະກິດສ້າງປະເທດລາວໃຫ້ນັບມື້ພັດທະນາ ແລະ ຈະເລີນຮຸ່ງເຮືອງ.

ໃນໂອກາດຄວາມໂສກເສົ້າເສຍດາຍນີ້, ສະຫາຍ ໂຕເລິມ ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສສ.ຫວຽດນາມ; ສະຫາຍ ເຈິ່ນ ເກິ້ມ ຕູ ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ ຍັງໄດ້ສົ່ງສານສະແດງຄວາມເສົ້າສະຫຼົດໃຈມາຍັງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປລາວ; ສະຫາຍ ວິໄລ ຫຼ້າຄໍາຟອງ ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ ປປລາວ ອີກດ້ວຍ.



# ສະພາແຫ່ງຊາດຫວຽດນາມ ສະຫງົບນິ້ງ 1 ນາທີ ໄວ້ອາໄລທ່ານ ໄຊສົມພອນ ພົມວິຫານ




(ສພຊ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດຫວຽດນາມຊຸດທີ XVI ໃນຕອນເຊົ້າວັນທີ 10 ສິງຫາ2026ພາຍໃຕ້ການເປັນປະທານຂອງທ່ານ ເຈິ່ນ ແທັງ ເໝິ້ນ ປະທານສະພາແຫ່ງຊາດ ແລະ ການຊີ້ນຳຂອງທ່ານ ນາງ ຫງວຽນ ຖິ ແທັງ ຮອງປະທານສະພາແຫ່ງຊາດ; ກ່ອນການເລີ່ມຕົ້ນວາລະພິຈາລະນາຮ່າງກົດໝາຍວ່າດ້ວຍການໄກ່ເກ່ຍໃນລະດັບຮາກຖານ (ສະບັບປັບປຸງ), ສະພາແຫ່ງຊາດ ໄດ້ໄວ້ອາໄລ 1 ນາທີ ເພື່ອລະນຶກເຖິງທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ - ຜູ້ນຳທີ່ມີບົດບາດສຳຄັນໃນການສືບທອດ, ບຳລຸງສ້າງ ແລະ ພັດທະນາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງຫວຽດນາມ-ລາວ.

# ປະກາດແຈ້ງການພິເສດ ຂອງ ສສ.ຫວຽດນາມ

(ສພຊ) - ຕາມຂ່າວສານຫວຽດນາມ, ໃນວັນທີ 9 ສິງຫາ 2026, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແລະ ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ປະກາດວ່າ: ສະຫາຍ ໄຊສົມພອນ ພົມວິຫານ ເກີດເມື່ອວັນທີ 12/12/1956, ກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ, ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ເຖິງແກ່ມໍລະນະກຳ ໃນວັນທີ 08/8/2026 ລວມອາຍຸ 70 ປີ.

ສະຫາຍ ໄຊສົມພອນ ພົມວິຫານ ເປັນຜູ້ນຳຫຼັກແຫຼ່ງຂອງພັກປະຊາຊົນປະຕິວັດລາວ, ເປັນຜູ້ນຳທີ່ມີການປະກອບສ່ວນອັນສຳຄັນເຂົ້າໃນການປະຕິວັດລາວ ກໍຄືພາລະກິດປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດລາວ; ສະຫາຍເປັນຜູ້ນຳທີ່ມີບົດບາດສຳຄັນໃນວຽກງານສືບທອດ,ເພີ່ມພູນຄູນສ້າງແລະພັດທະນາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ,ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ຫວຽດນາມ-ລາວ. ການຈາກໄປຂອງສະຫາຍ ຖືເປັນການສູນເສຍອັນໃຫຍ່ຫຼວງຕໍ່ປະເທດລາວ ແລະ ສາຍພົວພັນ ຫວຽດນາມ-ລາວ.

ສະນັ້ນ, ເພື່ອສະແດງເຖິງຄວາມອາໄລຕໍ່ສະຫາຍ ໄຊສົມພອນ ພົມວິຫານ ແລະ ບົນພື້ນຖານສາຍພົວພັນພິເສດ ຫວຽດນາມ-ລາວ, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແລະ ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ໄດ້ຕົກລົງໄວ້ອາໄລລະດັບຊາດເປັນເວລາ 2 ວັນ ໃຫ້ແກ່ສະຫາຍ ໄຊສົມພອນ ພົມວິຫານ ນັບແຕ່ວັນທີ 10-11 ສິງຫານີ້.

ໃນໄລຍະເວລາດັ່ງກ່າວ, ບັນດາອົງການ, ຫ້ອງການທົ່ວປະເທດ ແລະ ບັນດາອົງການຜູ້ແທນຫວຽດນາມຢູ່ຕ່າງປະເທດຈະຕ້ອງຫຼຸດທຸງຊາດລົງເຄິ່ງເສົາ ແລະ ພັນຜ້າແພດຳ ຕາມທີ່ໄດ້ກຳນົດໄວ້; ພ້ອມດຽວກັນນັ້ນ, ແມ່ນໃຫ້ງົດຈັດກິດຈະກຳບັນເທີງ ແລະ ການສະຫຼອງມ່ວນຊື່ນຕ່າງໆ ໃນຂອບເຂດທົ່ວປະເທດ.

# ສາມເສົ້າສະຫຼົດໃຈຈາກ ສປປເກົາຫຼີ

(ສພຊ) - ຄະນະປະຈຳສະພາປະຊາຊົນສູງສຸດ ແຫ່ງ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕເກົາຫຼີ ໄດ້ສົ່ງສານສະແດງຄວາມເສົ້າສະຫຼົດໃຈເຖິງຄະນະຮັບຜິດຊອບພິທີຊາປະນະກິດສົບລະດັບຊາດ ໃຫ້ແກ່ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວທີ່ນະຄອນຫຼວງວຽງຈັນ ເຊິ່ງມີເນື້ອໃນວ່າ:

ຄະນະປະຈຳສະພາປະຊາຊົນສູງສຸດແຫ່ງສາທາລະນະລັດປະຊາຊົນ ປະຊາທິປະໄຕເກົາຫຼີ ມີຄວາມເສົ້າສະຫຼົດໃຈແລະສຸດແສນອາໄລເມື່ອໄດ້ຮັບຂ່າວຕໍ່ການເຖິງແກ່ມໍລະນະກຳຂອງສະຫາຍ ໄຊສົມພອນ ພົມວິຫານ ອະດີດກຳມະການກົມການເມືອງສູນກາງພັກ, ອະດີດປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຂໍສະແດງຄວາມໄວ້ອາໄລຢ່າງສຸດຊຶ້ງ ມາຍັງສະພາແຫ່ງຊາດ, ປະຊາຊົນລາວພ້ອມດ້ວຍຄອບຄົວ ແລະ ຍາດຕິພີ່ນ້ອງຂອງສະຫາຍ ໄຊສົມພອນ ພົມວິຫານ.

ພວກຂ້າພະເຈົ້າ ຈະຈາລຶກຄຸນງາມຄວາມດີຂອງສະຫາຍ ໄຊສົມພອນ ພົມວິຫານ ທີ່ໄດ້ປະກອບສ່ວນອັນສຳຄັນຢ່າງໃຫຍ່ຫຼວງເຂົ້າໃນພາລະກິດການສ້າງສາສັງຄົມນິຍົມຂອງປະຊາຊົນລາວກໍຄືການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືທີ່ດີງາມ ລະຫວ່າງສອງຊາດ ສປປເກົາຫຼີ ແລະ ສປປລາວ ຕະຫຼອດໄປ.

# ສະຖານທູດລາວປະຈຳຫວຽດນາມ ວາງພວງມາລາໄວ້ອາໄລສະຫາຍ ໄຊສົມພອນ ພົມວິຫານ



(ສພຊ) - ຕອນເຊົ້າວັນທີ 10 ສິງຫາ 2026 ທີ່ນະຄອນຫຼວງຮ່າໂນ້ຍ, ຄະນະພັກ, ຄະນະນຳສະຖານເອກອັກຄະລັດຖະທູດລາວ ປະຈຳ ສສ.ຫວຽດນາມ ນຳໂດຍສະຫາຍ ນາງ ຄຳເຜົາ ເອີນທະວັນ ເລຂາຄະນະພັກຮາກຖານ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປລາວ ປະຈຳ ສສ. ຫວຽດນາມ ໄດ້ວາງພວງມາລາ ແລະຂຽນປຶ້ມໄວ້ອາໄລສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ,ປະທານສະພາແຫ່ງຊາດທີ່ເສຍຊີວິດໃນວັນທີ 8 ສິງຫາ 2026 ດ້ວຍພະຍາດເສັ້ນເລືອດອັກເສບທີ່ຮ້າຍແຮງ, ລວມອາຍຸໄດ້ 70 ປີ.

ໃນວັນດຽວກັນ, ການນຳຂັ້ນສູງພັກ-ລັດ ສສ.ຫວຽດນາມ ກໍໄດ້ເຂົ້າວາງພວງມາລາ ແລະ ເຊັນປຶ້ມໄວ້ອາໄລ ເພື່ອລະນຶກເຖິງສະຫາຍ ໄຊສົມພອນ ພົມວິຫານ ເຊິ່ງນຳໂດຍສະຫາຍ ເລ ມິງ ຮຶງ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ; ສະຫາຍ ເຈິ່ນ ເກິ໋ມ ຕູກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ; ສະຫາຍໂດ້ ວັນ ຈຽນ ກຳມະການກົມການເມືອງສູນກາງພັກ, ຮອງປະທານຜູ້ປະຈຳການສະພາແຫ່ງຊາດ; ສະຫາຍ ຫງວຽນ ຍຸຍ ຫງ໊ອກ ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ.

ສະຫາຍ ໄຊສົມພອນ ພົມວິຫານ ເກີດເມື່ອວັນທີ 12 ທັນວາ 1956 ທີ່ບ້ານນາແມວ ເມືອງວຽງໄຊ ແຂວງຫົວພັນ; ເປັນບຸດຂອງປະທານ ໄກສອນ ພົມວິຫານ ແລະ ແມ່ ທອງວິນ ພົມວິຫານ ໃນຄອບຄົວພະນັກງານປະຕິວັດ, ມີອ້າຍນ້ອງຮ່ວມກັນ 6 ຄົນ; ສະຫາຍໄດ້ສ້າງຄອບຄົວກັບສະຫາຍ ນາງ ວິພາວັນ ພົມວິຫານ, ມີລູກນຳກັນ 2 ຄົນ, ຊາຍ 1 ຄົນ ແລະ ຍິງ 1 ຄົນ; ປັດຈຸບັນຢູ່ບ້ານສີບຸນເຮືອງ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ.

ສະຫາຍ ໄຊສົມພອນ ພົມວິຫານ ແມ່ນໜຶ່ງໃນການນຳຫຼັກແຫຼ່ງຂອງສູນກາງພັກ; ເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີພິບໄຫວ, ເປັນຜູ້ມີປະສົບການຜ່ານການເປັນການນຳຢູ່ທ້ອງຖິ່ນ ແລະ ຫຼາຍຂະແໜງການ; ເປັນຜູ້ນຳທີ່ມີຜົນງານໂດດເດັ່ນ; ຕະຫຼອດຊີວິດຂອງເພິ່ນໄດ້ອຸທິດສະຕິປັນຍາ, ກຳລັງວັງຊາ ເພື່ອພາລະກິດປະຕິວັດຂອງພັກເຮົາ ເພື່ອການພັດທະນາປະເທດຊາດ ແລະ ຄວາມຢູ່ດີກິນດີຂອງປະຊາຊົນລາວບັນດາເຜົ່າ.

ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ເປັນການສູນເສຍອັນໃຫຍ່ຫຼວງຕໍ່ພັກ, ລັດ ແລະ ປະຊາຊົນລາວ ແລະ ໃນເວລາດຽວກັນ, ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ກໍໄດ້ສູນເສຍເພື່ອນທີ່ຍິ່ງໃຫຍ່, ຜູ້ເປັນສະຫາຍທີ່ຈິງຮັກພັກດີ ແລະ ສະໜິດສະໜົມ.

# ສະຖານທູດລາວ ປະຈຳ ສປຈີນ ຈັດພິທີໄວ້ອາໄລຕໍ່ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ



(ສພຊ) - ວັນທີ 10 ສິງຫາ 2026 ທີ່ນະຄອນຫຼວງປັກກິ່ງ, ສະຖານເອກອັກຄະລັດຖະທູດແຫ່ງ ສປປລາວ ປະຈຳ ສປຈີນ ໄດ້ຈັດພິທີໄວ້ອາໄລຕໍ່ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໂດຍມີສະຫາຍ ສົມພອນ ສີຈະເລີນ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງສປປລາວປະຈຳ ສປຈີນ, ບັນດາພະນັກງານສະຖານເອກອັກຄະລັດຖະທູດ ແລະ ຄອບຄົວ, ພະນັກງານລາວທີ່ພວມປະຕິບັດໜ້າທີ່ຢູ່ ສປຈີນ ພ້ອມດ້ວຍນັກຮຽນນັກສຶກສາລາວ ເຂົ້າຮ່ວມ.

ການຈັດພິທີໄວ້ອາໄລຄັ້ງນີ້, ເປັນການສະແດງເຖິງຄວາມກະຕັນຍູ, ຮູ້ບຸນຄຸນ ແລະ ຄວາມເຄົາລົບຮັກທີ່ມີຕໍ່ ສະຫາຍ ໄຊສົມພອນ ພົມວິຫານ ເຊິ່ງເປັນໜຶ່ງໃນບັນດາການນຳຂັ້ນສູງພັກ-ລັດຂອງລາວ ທີ່ໄດ້ອຸທິດເຫື່ອແຮງ, ສະຕິປັນຍາ ແລະ ກຳລັງກາຍ-ກຳລັງໃຈ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໂດຍສະເພາະໃນຂົງເຂດນິຕິບັນຍັດ ແລະ ສະພາແຫ່ງຊາດ.



## ການນຳຂັ້ນສູງ...

(ຕໍ່ຈາກໜ້າ 1)

ພົມວິຫານ ນຳໂດຍສະຫາຍ ສັນຕິພາບ ພົມວິຫານ ກຳມະການສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ; ຄອບຄົວສີພັນດອນ ນຳໂດຍສະຫາຍ ສອນໄຊ ສີພັນດອນ; ຄະນະຈາກຫ້ອງວ່າການສູນກາງພັກ ນຳໂດຍສະຫາຍ ເພັດ ພົມພິພັກ ກຳມະການກົມການເມືອງສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ.

ພ້ອມນີ້, ຍັງມີຄະນະຈາກສູນກາງແນວລາວສ້າງຊາດ ນຳໂດຍສະຫາຍ ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ; ຄອບຄົວສະຫາຍ ຄຳພັນ ພົມມະທັດ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງຍຸຕິທຳ; ຄະນະໂຄສະນາອົບຮົມສູນກາງພັກ ນຳໂດຍສະຫາຍ ຄຳພັນ ເຜີຍຍະວົງ ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ; ຄະນະຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ. ນອກນັ້ນ, ຍັງມີຄະນະວາງພວງມາລາຈາກບັນດາກະຊວງ, ສຳນັກງານ, ອົງການ, ຄອບຄົວການນຳ, ອະດີດການນຳພັກ-ລັດ, ບັນດານັກທຸລະກິດ, ບໍລິສັດ ແລະ ອື່ນໆ ຕາມລຳດັບ.

## ບົດສະດຸດີ...

(ຕໍ່ຈາກໜ້າ 1)

ປະນະກິດສົບລະດັບຊາດຂຶ້ນເພື່ອອຳລາສະຫາຍ ໄຊສົມພອນ ພົມວິຫານ ເປັນຄັ້ງສຸດທ້າຍ.

ສະຫາຍ ໄຊສົມພອນ ພົມວິຫານ ເກີດເມື່ອວັນທີ 12 ທັນວາ 1956 ຢູ່ເຂດທີ່ໝັ້ນປະຕິວັດທີ່ບ້ານນາແມວ, ເມືອງຊຳເໜືອ, ແຂວງຫົວພັນ; ເປັນບຸດຂອງປະທານ ໄກສອນ ພົມວິຫານ ແລະ ແມ່ ທອງວິນ ພົມວິຫານ ໃນຄອບຄົວພະນັກງານປະຕິວັດ, ມີອ້າຍນ້ອງຮ່ວມກັນ 6 ຄົນ; ສະຫາຍໄດ້ສ້າງຄອບຄົວກັບນາງ ວິພາວັນ ພົມວິຫານ, ມີລູກນຳກັນ 2 ຄົນ, ຊາຍ 1 ຍິງ 1.

ສະຫາຍໄດ້ກຳເນີດ ແລະ ເຕີບໃຫຍ່ໃນໄລຍະທີ່ປະເທດຊາດຢູ່ໃນສະພາວະສົງຄາມແລະໄດ້ດຳລົງຊີວິດຕິດພັນກັບສະພາບແວດລ້ອມຂອງຂະບວນການຕໍ່ສູ້ປະຕິວັດປົດປ່ອຍຊາດຂອງປະຊາຊົນລາວບັນດາເຜົ່າ ແລະ ຢູ່ໃນຄວາມໂອບເອື້ອອາລີຂອງຄອບຄົວ ແລະ ຖັນແຖວພະນັກງານ-ນັກຮົບປະຕິວັດ. ຍ້ອນແນວນັ້ນ, ສະຫາຍຈຶ່ງໄດ້ຮັບຮູ້ເຂົ້າໃຈສະພາບການບ້ານເມືອງໄດ້ເປັນຢ່າງດີ, ມີຄວາມຕື່ນຕົວ ແລະ ຕັດສິນໃຈເດີນຕາມເສັ້ນທາງປະຕິວັດແຕ່ຍາມເຍົາໄວ.

·ເລີ່ມຕົ້ນຈາກປີ1962 ອາຍຸໄດ້ 6 ປີ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ອອກຈາກຄອບຄົວໄປຮຽນຊັ້ນປະຖົມ ແລະ ມັດທະຍົມ ຢູ່ ສສ.ຫວຽດນາມ ແລະ ສປຈີນ ແລະ ກັບຄືນມາຮັບໃຊ້ວຽກງານໃນຖັນແຖວກຳລັງປະກອບອາວຸດ ຢູ່ເມືອງວຽງໄຊ, ແຂວງຫົວພັນ ຈົນຮອດປີ 1976.

· ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ, ສະຫາຍໄດ້ຖືກຄັດເລືອກຈາກການຈັດຕັ້ງໃຫ້ໄປຮຽນລະດັບປະລິນຍາຕີ ແລະ ປະລິນຍາໂທ ຢູ່ມະຫາວິທະຍາໄລແຫ່ງລັດ ມົດສະກູ (ໂລໂມໂນຊົບ) ສະຫະພາບໂຊວຽດ ແລະ ຕໍ່ມາໄດ້ຖືກແຕ່ງຕັ້ງໃຫ້ໄປຮຽນຕໍ່ທີ່ສະຖາບັນບັນດິດວິທະຍາສາດສັງຄົມມົດສະກູ ສະຫະພາບໂຊວຽດ ຈົນສາມາດຄົ້ນຄວ້າ ແລະ ປ້ອງກັນຈົບປະລິນຍາເອກດ້ານເສດຖະສາດການເມືອງ ກັບມາປະເທດ.

· ສະຫາຍ ໄຊສົມພອນ ພົມວິຫານ ແມ່ນນັກຮຽນຮູ້ປັນຍາຊົນປະຕິວັດທີ່ດີເດັ່ນຜູ້ໜຶ່ງຂອງພັກ-ລັດພວກເຮົາທີ່ໄດ້ຝຶກຝົນຫຼໍ່ຫຼອມ ແລະ ເຕີບໃຫຍ່ຂຶ້ນຢ່າງເປັນລະບົບໃນຂະບວນການວຽກງານຕົວຈິງ, ເລີ່ມຈາກເປັນພະນັກງານວິຊາການ, ເປັນອາຈານສອນ ໄດ້ກ້າວຂຶ້ນມາເປັນພະນັກງານນຳພາຫຼັກແຫຼ່ງທີ່ສູງຂຶ້ນຕາມແຕ່ລະຂັ້ນ ຂຶ້ນມາຈົນເປັນການນຳຍຸດທະສາດຂອງພັກ ແລະ ລັດເຮົາ.

· ປີ 1989-1991 ສະຫາຍໄດ້ດຳລົງຕຳແໜ່ງເປັນຮອງເຈົ້າແຂວງສະຫວັນນະເຂດ ທັງເປັນຫົວໜ້າພະແນກການຄ້າ ແລະ ພົວພັນເສດຖະກິດກັບຕ່າງປະເທດ.

· ປີ 1991 ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ V ຂອງພັກ, ໄດ້ຮັບເລືອກຕັ້ງເປັນກຳມະການສູນກາງພັກ; ດຳລົງຕຳແໜ່ງເປັນຮອງເລຂາຄະນະພັກ, ຮອງເຈົ້າແຂວງທັງເປັນຫົວໜ້າຫ້ອງວ່າການແຂວງສະຫວັນນະເຂດ.

· ປີ 1993-1995 ເປັນເລຂາພັກແຂວງ, ເປັນເຈົ້າແຂວງສະຫວັນນະເຂດ.

· ປີ 1995-1997 ເປັນກຳມະການສູນກາງພັກ ສະໄໝທີ VI, ເປັນລັດຖະມົນຕີກະຊວງການເງິນ.

· ປີ 1998-2001 ເປັນສະມາຊິກສະພາແຫ່ງຊາດ ຊຸດທີ IV, ເປັນລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

· ປີ 2001-2006 ເປັນກຳມະການສູນກາງພັກ ສະໄໝທີ VII, ເປັນສະມາຊິກສະພາແຫ່ງຊາດ, ເປັນປະທານກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ຊຸດທີ V, ຮອງປະທານລັດຖະສະພາສາກົນແຫ່ງ ສປປລາວ.

· ປີ 2006-2010 ເປັນກຳມະການສູນກາງພັກ ສະໄໝທີVIII, ເລຂາຄະນະພັກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ຊຸດທີ VI, ຄະນະປະຈຳ ແລະ ຮອງປະທານສະພາແຫ່ງຊາດ ທັງຄວບຕຳແໜ່ງປະທານກຳມາທິການການຕ່າງປະເທດ.

· ປີ 2011-2015 ເປັນກຳມະການສູນກາງພັກ ສະໄໝທີ IX, ເລຂາຄະນະພັກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ຊຸດທີ VII, ຄະນະປະຈຳ ແລະ ຮອງປະທານສະພາແຫ່ງຊາດ.

· ກອງປະຊຸມໃຫຍ່ຄັ້ງທີ X ໃນປີ 2016, ຄັ້ງທີ XI ໃນປີ 2021 ແລະ ຄັ້ງທີ XII ໃນປີ 2026 ສະຫາຍ ໄຊສົມພອນ ພົມວິຫານ ສືບຕໍ່ໄດ້ຮັບເລືອກຕັ້ງເປັນກຳມະການສູນກາງພັກ ແລະ ເປັນກຳມະການກົມການເມືອງສູນກາງພັກ.

· ເດືອນ 6/2016-2020 ເປັນປະທານຄະນະກຳມະການສູນກາງແນວລາວສ້າງຊາດ ສະໄໝທີ X.

· ເດືອນ 3/2021 ເປັນປະທານສະພາແຫ່ງຊາດ ຊຸດທີ IX.

· ເດືອນ 3/2026 ໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ຮັບເລືອກຕັ້ງເປັນປະທານສະພາແຫ່ງຊາດ ອີກເປັນສະໄໝທີ 2 ຈົນເຖິງວັນສິ້ນລົມຫາຍໃຈສຸດທ້າຍ.

ບັນດາທ່ານ, ບັນດາສະຫາຍ;

ແຂກທີ່ມີກຽດທັງພາຍໃນ ແລະ ຕ່າງປະເທດ, ເພື່ອນມິດ, ຍາດພີ່ນ້ອງທີ່ຮັກແພງທັງຫຼາຍ.

ຕະຫຼອດໄລຍະ 5 ທົດສະວັດກວ່າ ທີ່ສະຫາຍ ໄຊສົມພອນ ພົມວິຫານ ໄດ້ເຂົ້າຮ່ວມໃນພາລະກິດລວມຂອງພັກ-ລັດ ແລະ ໄດ້ຮັບການຢັ້ງຢືນວ່າ ສະຫາຍແມ່ນນັກຮຽນຮູ້ປັນຍາຊົນປະຕິວັດທີ່ມີຄວາມຮູ້ຄວາມສາມາດທີ່ເລິກເຊິ່ງຫຼາຍດ້ານ, ມີວິໄສທັດກວ້າງໄກ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີມະໂນທຳ, ມີຈິດໃຈຮັກເຊື້ອແພງຊາດ, ມີນ້ຳໃຈເສຍສະຫຼະອັນສູງສົ່ງ, ມີຄວາມຈົງຮັກພັກດີ-ບໍລິສຸດ ຕໍ່ພັກ ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ, ຍາມໃດກໍມີຄວາມມຸ່ງໝັ້ນ ແລະ ຢຶດໝັ້ນໃນອຸດົມການອັນສູງສົ່ງຂອງພັກ; ມີຄວາມທຸ່ນທ່ຽງ, ສຸຂຸມ-ຮອບຄອບ ແລະ ມີໄຫວພິບໃນການຈັດຕັ້ງປະຕິບັດວຽກງານທີ່ຕົນຮັບຜິດຊອບ; ກຳແໜ້ນແນວທາງ, ນະໂຍບາຍຂອງພັກ ແລະ ເປັນແບບຢ່າງນຳໜ້າໃນການຈັດຕັ້ງປະຕິບັດເຂົ້າສູ່ວຽກງານຕົວຈິງ; ສະຫາຍໄດ້ຜ່ານການຝຶກຝົນ, ທົດສອບໃນຫຼາຍຂົງເຂດວຽກງານ ເຊິ່ງໃນແຕ່ລະວຽກທີ່ຖືກມອບໝາຍ ລ້ວນແຕ່ໄດ້ຮັບຜົນສຳເລັດ ແລະ ມີຜົນງານຢ່າງເປັນຮູບປະທຳ.

ຕະຫຼອດຊີວິດແຫ່ງການປະຕິວັດຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ອຸທິດຕົນເພື່ອພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ເວລາໃດກໍຖືຜົນປະໂຫຍດຂອງພັກ, ຂອງຊາດ ແລະ ຂອງປະຊາຊົນເໜືອກວ່າສິ່ງອື່ນໃດ; ເວລາໃດສະຫາຍກໍດຳລົງຊີວິດແບບລຽບງ່າຍ, ປອດໃສຂາວສະອາດ, ປະຢັດມັດທະຍັດ, ໃກ້ຊິດຕິດແທດກັບມະຫາຊົນ, ຈິງໃຈຕໍ່ເພື່ອນສະຫາຍ, ເອື້ອເຟື້ອເຜື່ອແຜ່ກັບທຸກຄົນຢູ່ອ້ອມຂ້າງຕົນ; ເຂັ້ມງວດໃນດ້ານຫຼັກການ, ເຄັ່ງຄັດຕໍ່ລະບຽບວິໄນ; ໄດ້ຮັບຄວາມເຄົາລົບນັບຖື, ເຊື່ອໝັ້ນຈາກເພື່ອນສະຫາຍ ແລະ ປະຊາຊົນລາວບັນດາເຜົ່າ ກໍຄືຈາກເພື່ອນມິດສາກົນ.

ຍ້ອນແນວນັ້ນ, ສະຫາຍຈຶ່ງໄດ້ຮັບຄວາມໄວ້ວາງໃຈຈາກພັກ, ລັດ ແລະ ປະຊາຊົນ ໃຫ້ດຳລົງຕຳແໜ່ງຍຸດທະສາດສຳຄັນຕ່າງໆ ເປັນຕົ້ນ: ເປັນກຳມະການສູນກາງພັກ 8 ສະໄໝ (ສະໄໝທີ V, VI, VII, VIII, IX, X, XI ແລະ XII); ເປັນກຳມະການກົມການເມືອງສູນກາງພັກ 3 ສະໄໝ (ສະໄໝທີ X, XI ແລະ XII); ເປັນປະທານສະພາແຫ່ງຊາດ ຊຸດທີ IX ແລະ ຊຸດທີX; ເປັນປະທານສູນກາງແນວລາວສ້າງຊາດ 1 ສະໄໝ; ເປັນສະມາຊິກສະພາແຫ່ງຊາດ 7 ຊຸດ (ຊຸດທີ IV, V, VI, VII, VIII, IX ແລະ X).

ດ້ວຍຜົນງານ ແລະ ຄຸນງາມຄວາມດີຂອງສະຫາຍ ໄຊສົມພອນ ພົມວິຫານ ທີ່ໄດ້ເສຍສະຫຼະເຫື່ອແຮງ, ທຸ່ມເທສະຕິປັນຍາເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດຕະຫຼອດຊີວິດຂອງສະຫາຍນັ້ນ, ສະຫາຍຈຶ່ງໄດ້ຮັບການຍ້ອງຍໍສັນລະເສີນຈາກພັກ ແລະ ລັດຂອງພວກເຮົາ ແລະ ຈາກເພື່ອນມິດສາກົນ ເປັນຈຳນວນຫຼວງຫຼາຍ ເຊັ່ນ:

\+ ໄດ້ຮັບຫຼຽນໄຊປະເພດຕ່າງໆ ຈຳນວນ 17 ຫຼຽນ ຄື:

1. ຫຼຽນໄຊອິດສະຫຼະ ຊັ້ນ I 2 ຫຼຽນ;
2. ຫຼຽນໄຊອິດສະຫຼະ ຊັ້ນ II 2 ຫຼຽນ;
3. ຫຼຽນໄຊແຮງງານຊັ້ນ I 3 ຫຼຽນ;
4. ຫຼຽນໄຊແຮງງານຊັ້ນ II 5 ຫຼຽນ;
5. ຫຼຽນໄຊແຮງງານຊັ້ນ III 5 ຫຼຽນ.

ນອກຈາກນັ້ນ, ຍັງໄດ້ຮັບຫຼຽນໄຊດາວຄຳ ແລະ ຫຼຽນໄຊ ໂຮ່ ຈີ ມິນ ຂອງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ; ພ້ອມກັນນັ້ນ, ຍັງໄດ້ຮັບຫຼຽນກຽດຕິຍົດລະດັບສູງ, ຫຼຽນກາ, ຫຼຽນກາລະນຶກ ຈາກທັງພາຍໃນ ແລະ ຕ່າງປະເທດ ຫຼາຍກວ່າ 22 ຫຼຽນ.

ບັນດາທ່ານ, ເພື່ອນມິດສະຫາຍ ທີ່ຮັກແພງທັງຫຼາຍ.

ນັບແຕ່ເວລາທີ່ສະຫາຍ ໄຊສົມພອນ ພົມວິຫານ ເລີ່ມມີອາການເຈັບເປັນ, ການຈັດຕັ້ງພ້ອມດ້ວຍຄອບຄົວ, ຍາດພີ່ນ້ອງ, ແພດໝໍ ທັງພາຍໃນ ແລະ ປະເທດເພື່ອນມິດ ຕ່າງກໍໄດ້ເອົາໃຈໃສ່ເບິ່ງແຍງຢ່າງໃກ້ຊິດ ແລະ ສຸມໃສ່ປິ່ນປົວຢ່າງສຸດຄວາມສາມາດ, ແຕ່ຍ້ອນພະຍາດຮ້າຍແຮງຈຶ່ງບໍ່ສາມາດກອບກູ້ເອົາຊີວິດຂອງສະຫາຍໄວ້ໄດ້. ສະຫາຍໄດ້ສິ້ນລົມຫາຍໃຈ ແລະ ຈາກພວກເຮົາໄປຢ່າງສະຫງົບ ໃນເວລາ 11 ໂມງ 18 ນາທີ ຂອງວັນທີ 8 ສິງຫາ 2026.

ສຳລັບພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ, ເຮັດໃຫ້ພັກ-ລັດກໍຄືປະເທດເຮົາສູນເສຍພະນັກງານການນຳຂັ້ນສູງ, ການນຳຍຸດທະສາດທີ່ສຳຄັນ ໄປອີກສະຫາຍໜຶ່ງ ເຊິ່ງໄດ້ນຳເອົາຄວາມໂສກເສົ້າ, ເສຍດາຍແລະ ອາໄລອາວອນອັນສຸດຊຶ້ງ ໃຫ້ແກ່ພັກ-ລັດ ແລະ ຄອບຄົວ, ຍາດພີ່ນ້ອງ, ເພື່ອນມິດ ຜູ້ຢູ່ໃກ້ ແລະ ໄກຢ່າງຫາອັນປຽບບໍ່ໄດ້.

ໃນເວລານາທີແຫ່ງຄວາມໂສກເສົ້າເສຍດາຍນີ້, ພວກເຮົາຂໍໃຫ້ຄຳໝັ້ນສັນຍາວ່າ: ຈະສືບຕໍ່ຢຶດໝັ້ນອຸດົມການ, ທາດແທ້ປະຕິວັດຂອງພັກເຮົາຢ່າງເດັດດ່ຽວໜຽວແໜ້ນ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນ ກໍຄືຄວາມສາມັກຄີເປັນປຶກແຜ່ນໃນທົ່ວປວງຊົນລາວທັງຊາດ ໃຫ້ນັບມື້ນັບແໜ້ນແຟ້ນ, ສືບຕໍ່ນຳພາພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເຮັດໃຫ້ວັດຖຸປະສົງສູງສຸດຂອງພັກ ແລະ ຄວາມມຸ່ງຫວັງຂອງປະຊາຊົນລາວບັນດາເຜົ່າ ກໍຄືຂອງສະຫາຍ ໄຊສົມພອນ ພົມວິຫານ ໃຫ້ປາກົດຜົນເປັນຈິງ. ພ້ອມນັ້ນ, ກໍຈະສືບຕໍ່ເບິ່ງແຍງຄອບຄົວ ແລະ ຊ່ວຍເຫຼືອກໍ່ສ້າງລູກຫຼານຂອງສະຫາຍ ເພື່ອສືບຕໍ່ປະກອບສ່ວນເຂົ້າໃນການປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກເຮົາ ສືບຕໍ່ໄປ.

ສະຫາຍ ໄຊສົມພອນ ພົມວິຫານ ທີ່ອາໄລຮັກ,

ສະຫາຍໄດ້ຈາກພວກເຮົາໄປຢ່າງບໍ່ມີວັນຈະກັບຄືນມາແລ້ວ, ແຕ່ພັກ-ລັດ, ພະນັກງານ, ສະມາຊິກພັກ ແລະ ປວງຊົນລາວທັງຊາດ ຈະຂໍຈົດຈຳຜົນງານ, ຄຸນງາມຄວາມດີຂອງສະຫາຍ ທີ່ໄດ້ອຸທິດໃຫ້ແກ່ພາລະກິດປະຕິວັດຕະຫຼອດໄລຍະ 50 ກວ່າປີທີ່ຜ່ານມານັ້ນ ໄວ້ຢ່າງບໍ່ມີວັນຫຼົງລືມ.

ຊື່ສຽງຮຽງນາມ ແລະ ກຽດຕິຄຸນຂອງສະຫາຍ ໄດ້ຕິດພັນກັບໄລຍະປະຫວັດສາດຂອງຊາດລາວ ແລະ ພາລະກິດປະຕິວັດຂອງພັກເຮົາ ແລະ ຈະຝັງແໜ້ນຢູ່ໃນຄວາມຊົງຈຳຂອງພວກເຮົາຕະຫຼອດໄປ.

ພວກເຮົາຂໍອຳລາສະຫາຍເປັນຄັ້ງສຸດທ້າຍ, ຂໍໃຫ້ດວງວິນຍານຂອງສະຫາຍຈົ່ງໄປສູ່ສຸຄະຕິເຖີ້ນ!

ຂໍເຊີນບັນດາທ່ານ, ບັນດາສະຫາຍ ລຸກຂຶ້ນ ກົ້ມຫົວໄວ້ອາໄລເຖິງດວງວິນຍານຂອງສະຫາຍ ໄຊສົມພອນ ພົມວິຫານ 1 ນາທີ (ຂໍເຊີນ)

**(ຂໍຂອບໃຈ)**

ອາດ ກະວີລາວ

# ດ້ວຍຄວາມອາໄລຮັກຢ່າງສຸດຊຶ້ງ ສະຫາຍ ໄຊສົມພອນ ພົມວິຫານ

**# ທອງໃບ ໂພທິສານ ສິລະປິນດີເດັ່ນ**
**ປະທານສະມາຄົມນັກປະພັນລາວ**

❈ ວັນນີ້ ຟ້າກໍ່າເສົ້າ  ໝອງໝົ່ນເສຍແສງ
ວາໂຍສູນພາຍພັດ  ມືດມົນກວມກຸ້ມ
ເໝືອນແຜ່ນທໍລະນີພື້ນ  ເນືອງນັນຮ້ອງຮໍ່າ
ທົນລະກໍາໂສກເສົ້າ  ເມື່ອສູນສິ້ນທ່ານຜູ້ນໍາ

❈ ທ່າມກາງຄວາມໂສກເສົ້າ  ສະເທືອນທີ່ເຖິງໃຈ
ສຸດອາໄລອາວອນ  ບໍ່ອາດພັນລະນາໄດ້
ໃຜກໍ່ເຮຣິນໄຫ້  ເສຍໃຈຈໍາຈາກ
ຍິນທຸກແຊວສຽງສະອື້ນ  ສະເທືອນເທົ້າທົ່ວແດນ

❈ ປວງຊົນລາວທຸກເຂດແຄວ້ນ  ອາໄລຍິ່ງເຫຼືອແສນ
ຖືເປັນການສູນເສຍ  ໝົ່ນແນວນາມເຄົ້າ
ບຸລຸດລາວຜູ້ຫານກ້າ  ລືຊາເຊັ່ງຊ່າ
ປະຊາລາວຊາດເຊື້ອ  ເໜືອໃຕ້ເລົ່າບໍ່ລືມ

❈ ຄຸນຄວາມດີທ່ານສ້າງໄວ້  ສູງສົ່ງຄະນານັບ
ພັກ-ລັດທັງປວງຊົນ  ເທີດທູນຮັກສາໄວ້
ທ່ານໄຊສົມພອນ ພົມວິຫານໄດ້ເສີມສ້າງ  ຜົນງານຫຼາຍເລີດເດັ່ນ
ເປັນການນໍາແກ່ນແກ້ວ  ລືເທົ້າທົ່ວແຜ່ນດິນ

❈ ທ່ານທຸ້ມເທຮັບໃຊ້  ປະເທດຊາດປະຊາຊົນ
ທັງເຫື່ອແຮງທັງສະຕິປັນຍາ  ທ່ຽງຕົງໝາຍໝັ້ນ
ບໍລິສຸດໃຈພ້ອມ  ຄຸນຄວາມດີໄດ້ສ້າງກໍ່
ສົມໝົ່ນແນວປະເສີດແທ້  ມູນເຊື້ອໄດ້ສືບສານ

❈ ກຽດຊື່ສຽງທ່ານຊ່າຍ້ອງ  ລືເດັ່ນເປັນການນໍາ
ທຸກທີ່ສັນລະເສີນຍໍ  ຊື່ນຊົມນິຍົມເວົ້າ
ແບບຢ່າງດີນໍາໜ້າ  ປວງປະຊາອາໄສເພິ່ງ
ບຸນຄຸນສູງສົ່ງລໍ້າ  ການນໍາກ້າວຍຸກສະໄໝ

❈ ຜົນງານທ່ານສ້າງໄວ້  ຍິ່ງໃຫຍ່ມະຫາສານ
ຄົງຢູ່ໃນດວງໃຈ  ຊາດປະຊາບໍ່ລືມໄດ້
ຈະຍືນຍົງໄປເມືອໜ້າ  ປວງປະຊາໄດ້ຈໍາຈື່
ຈາລຶກໃນແຜ່ນພື້ນ  ບໍ່ມີມື້ເສື່ອມສະລາຍ

❈ ວັນນີ້ ສຸດອາໄລທ່ານໄດ້  ຈໍາພາກພອຍພັດ
ພັກ-ລັດ ທັງປວງຊົນລາວ  ແຕ່ເໜືອເຖິງໃຕ້
ສຸດອາໄລແສນເສົ້າ  ໂສກາກັ້ນໂສກ
ຄວາມທຸກໃຈໃນໂລກນີ້  ໃສແທ້ຊິປຽບປານ

❈ ຂໍໃຫ້ ດວງວິນຍານທ່ານຈົ່ງໄດ້  ໄປສູ່ສຸຄະຕິພົບ
ເນົາໃນບົນສວາງສະຫວັນ  ຢູ່ສະຖິດສະຖຽນຟ້າ
ຂໍໃຫ້ ບຸນຜະຫຼາຊູຄໍ້າ  ກຸສົນດີເປັນທີ່ເພິ່ງ
ສົ່ງທ່ານເຖິງແຫ່ງຫ້ອງ  ສະຫວັນຟ້າຢູ່ກະເສີມ ທ່ານເອີຍ!



## ສັກສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມຫ້ຽນ**

❈ **ອໍາ**ລາອາໄລຢ່າງສຸດຊຶ້ງຕໍ່ການຈາກໄປຢ່າງບໍ່ມີວັນຫວນກັບຂອງ**ທ່ານ ໄຊສົມພອນ ພົມວິຫານ** ປະທານສະພາແຫ່ງຊາດ ລວມອາຍຸໄດ້ **69 ປີ** ລາລັບແລ້ວ ລະໂລກດັບສັງຂານ ທູ້ນສູ່ນິພານ ແຫ່ງເມືອງສະຫວັນຟ້າ ເປັນເທວະດາບົນເບື້ອງ ນະພາໄລສູງສົ່ງ ຊາດໜ້າມີໃຫ້ຕ່າວໂຕ້ງຄືນເບື້ອງບ່ອນສະພາ **ເດີທ່ານເອີຍ!**

❈ **ຊົມ**ເຊີຍວັນສື່ມວນຊົນແຫ່ງຊາດ **(13 ສິງຫາ 1950-13 ສິງຫາ 2026)** ທີ່ໝູນວຽນມາບັນຈົບຄົບຮອບ **76 ປີ** ຮຽມລ່ຍ່ຍົກຍ້ອງ ຊົມຊື່ນຍິນດີ ເຈັດສິບຫົກປີສື່ມວນຊົນ ຄູ່ຄຽງລະຫຍາຍກ້າວ ນໍາປະເທດລາວເດັ່ນຊື່ນ ເອທີສາກົນຮັບຊາບ ເພາະສື່ມວນຊົນຊ່ວຍຍູ້ ໂລກກວ້າງຮູ້ຊື່ລາວ **ນັ້ນແລ້ວ!**

## ສຸພາສິດ-ຄະຕິເຕືອນໃຈ

*#ດອກຫຍ້າ*

"ຢ່າເອົ້າກ່ອນເກີດ ຢ່າສະເດີດກ່ອນຕາຍ"



## ການນໍາ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 14 ສິງຫານີ້ ທີ່ຫໍປະຊຸມແຫ່ງຊາດ, ບັນດາການນໍາ, ອະດີດການນໍາພັກ-ລັດ ພ້ອມດ້ວຍມວນຊົນໃນນະຄອນຫຼວງວຽງຈັນ ນໍາໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແລະ ສະຫາຍ ສອນໄຊ ສີພັນດອນກໍາມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ໄດ້ຮ່ວມໃສ່ບາດຖວາຍສັງຂະທານແດ່ພະສົງ ເພື່ອອຸທິດສ່ວນບຸນສ່ວນກຸສົນໃຫ້ແກ່ສະຫາຍ ໄຊສົມພອນ ພົມວິຫານ ອະດີດກໍາມະການກົມການເມືອງສູນກາງພັກ, ອະດີດປະທານສະພາແຫ່ງຊາດທີ່ໄດ້ເຖິງແກ່ມໍລະນະກໍາໃນວັນທີ 8 ສິງຫາຜ່ານມາ ດ້ວຍພະຍາດເສັ້ນເລືອດອັກເສບທີ່ຮ້າຍແຮງ, ລວມອາຍຸໄດ້ 70 ປີ.

ການໃສ່ບາດຖວາຍສັງຂະທານໃນຄັ້ງນີ້ດໍາເນີນໄປຕາມຮີດຄອງປະເພນີ ແລະ ຫຼັກພຸດທະສາສະໜາໂດຍໄດ້ຟັງທໍາມະເທດສະໜາ; ຫຼັງຈາກນັ້ນ, ກໍໄດ້ຮ່ວມກັນໃສ່ບາດຖວາຍສັງຂະທານແດ່ພະສົງ ດ້ວຍຈິດໃຈເຄົາລົບ ແລະ ສໍາລວມ ເພື່ອອຸທິດສ່ວນບຸນສ່ວນກຸສົນໃຫ້ແກ່ສະຫາຍ ໄຊສົມພອນພົມວິຫານ ຕາມຄວາມເຊື່ອຖືທາງພຸດທະສາສະໜາ, ທັງສະທ້ອນໃຫ້ເຫັນເຖິງການສືບສານຮັກສາຮີດຄອງປະເພນີ ແລະ ວັດທະນະທໍາອັນດີງາມຂອງຊາດລາວເຮົາ ທີ່ໄດ້ສືບທອດກັນມາແຕ່ອະດີດຈົນຮອດປັດຈຸບັນ.





## ພິທີຊາປະນະກິດ...

(ຕໍ່ຈາກໜ້າ 1)

ປະເທດ, ບັນດາການນຳຂັ້ນສູງ ແລະອະດີດການນຳຂັ້ນສູງຂອງ ພັກ-ລັດ, ຄອບຄົວການນຳພັກ-ລັດ ແລະ ຍາດພີ່ນ້ອງ; ສະຫາຍ ເຈີ່ນ ເກິ່ມ ຕູ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ, ບັນດາທູຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປລາວ ພ້ອມດ້ວຍມວນຊົນພາຍໃນນະຄອນຫຼວງວຽງຈັນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ເລີ່ມພິທີທາງການ, ສະຫາຍ ທອງລຸນ ສີສຸລິດ ໄດ້ຂຶ້ນກ່າວສະດຸດີ ເຊິ່ງທວນຄືນຊີວະປະຫວັດ ແລະ ການເຄື່ອນໄຫວໂດຍຫຍໍ້ຕະຫຼອດໄລຍະ 5 ທົດສະວັດກວ່າ ນັບແຕ່ປີ 1962 ຈົນເຖິງວັນສິ້ນລົມຫາຍໃຈສຸດທ້າຍ ທີ່ສະຫາຍ ໄຊສົມພອນ ພົມວິຫານ ໄດ້ເຂົ້າຮ່ວມໃນພາລະກິດລວມຂອງພັກ-ລັດ ແລະ ໄດ້ຮັບການຢັ້ງຢືນວ່າ ສະຫາຍແມ່ນນັກຮຽນຮູ້ປັນຍາຊົນປະຕິວັດ ທີ່ມີຄວາມຮູ້-ຄວາມສາມາດທີ່ເລິກເຊິ່ງຫຼາຍດ້ານ, ມີວິໄສທັດກວ້າງໄກ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີມະໂນທຳ, ມີຈິດໃຈຮັກເຊື້ອແພງຊາດ, ມີນ້ຳໃຈເສຍສະຫຼະອັນສູງສົ່ງ, ມີຄວາມຈົງຮັກພັກດີ-ບໍລິສຸດ ຕໍ່ພັກ ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ, ຍາມໃດກໍມີຄວາມມຸ່ງໝັ້ນ ແລະ ຢຶດໝັ້ນໃນອຸດົມການອັນສູງສົ່ງຂອງພັກ; ມີຄວາມຖຸ່ມທ່ຽງ, ສຸຂຸມ-ຮອບຄອບແລະໄຫວພິບໃນການຈັດຕັ້ງປະຕິບັດວຽກງານທີ່ຕົນຮັບຜິດຊອບ; ກຳແໜ້ນແນວທາງ, ນະໂຍບາຍຂອງພັກ ແລະ ເປັນແບບຢ່າງນຳໜ້າໃນການຈັດຕັ້ງປະຕິບັດເຂົ້າສູ່ວຽກງານຕົວຈິງ; ຜ່ານການຝຶກຝົນ, ທົດສອບໃນຫຼາຍຂົງເຂດວຽກງານ ເຊິ່ງໃນແຕ່ລະວຽກທີ່ຖືກມອບໝາຍລ້ວນແຕ່ໄດ້ຮັບຜົນສຳເລັດແລະມີຜົນງານຢ່າງເປັນຮູບປະທຳ. ຕະຫຼອດຊີວິດແຫ່ງການປະຕິວັດຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ, ສະຫາຍ ໄຊສົມພອນພົມວິຫານ ໄດ້ອຸທິດຕົນເພື່ອພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ເວລາໃດກໍຖືຜົນປະໂຫຍດຂອງພັກ, ຂອງຊາດແລະຂອງປະຊາຊົນ ເໜືອກວ່າສິ່ງອື່ນໃດ; ເວລາໃດ ສະຫາຍກໍດຳລົງຊີວິດແບບລຽບງ່າຍ, ປອດໃສຂາວສະອາດ, ປະຢັດມັດທະຍັດ, ໃກ້ຊິດຕິດແທດກັບມະຫາຊົນ, ຈິງໃຈຕໍ່ເພື່ອນສະຫາຍ, ເອື້ອເຟື້ອເພື່ອແຜ່ກັບທຸກຄົນຢູ່ອ້ອມຂ້າງຕົນ; ເຂັ້ມງວດໃນດ້ານຫຼັກການ, ເຄັ່ງຄັດຕໍ່ລະບຽບວິໄນ; ໄດ້ຮັບຄວາມເຄົາລົບນັບຖື, ເຊື່ອໝັ້ນຈາກເພື່ອນສະຫາຍ ແລະ ປະຊາຊົນລາວບັນດາເຜົ່າ ກໍຄືຈາກເພື່ອນມິດສາກົນ. ຍ້ອນແນວນັ້ນ, ຈຶ່ງໄດ້ຮັບຄວາມໄວ້ວາງໃຈຈາກພັກ, ລັດ ແລະ ປະຊາຊົນ ໃຫ້ດຳລົງຕຳແໜ່ງຍຸດທະສາດສຳຄັນຕ່າງໆເປັນຕົ້ນ: ເປັນກຳມະການສູນກາງພັກ 8 ສະໄໝ (ສະໄໝທີ V-XII), ເປັນກຳມະການກົມການເມືອງສູນກາງພັກ 3 ສະໄໝ (ສະໄໝທີ X-XII), ເປັນປະທານສະພາແຫ່ງຊາດ ຊຸດທີ IX ແລະ ຊຸດທີ X, ເປັນປະທານສູນກາງແນວລາວສ້າງຊາດ 1 ສະໄໝ, ເປັນສະມາຊິກສະພາແຫ່ງຊາດ 7 ຊຸດ (ຊຸດທີ IV-X). ດ້ວຍຜົນງານ ແລະ ຄຸນງາມຄວາມດີຂອງສະຫາຍ ໄຊສົມພອນ ພົມວິຫານ ທີ່ໄດ້ເສຍສະຫຼະເຫື່ອແຮງ, ທຸ່ມເທສະຕິປັນຍາ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ຕະຫຼອດຊີວິດຂອງຕົນນັ້ນ, ສະຫາຍຈຶ່ງໄດ້ຮັບການຍ້ອງຍໍສັນລະເສີນຈາກພັກ ແລະ ລັດຂອງພວກເຮົາແລະ ຈາກເພື່ອນມິດສາກົນເປັນຈຳນວນຫຼວງຫຼາຍເຊັ່ນ: ໄດ້ຮັບຫຼຽນໄຊປະເພດຕ່າງໆ ຈຳນວນ 17 ຫຼຽນ ຄື: ຫຼຽນໄຊອິດ ສະຫຼະຊັ້ນ I 2 ຫຼຽນ ແລະ ຊັ້ນ II 2 ຫຼຽນ; ຫຼຽນໄຊແຮງງານຊັ້ນ I 3 ຫຼຽນ, ຊັ້ນ II 5 ຫຼຽນ ແລະ ຊັ້ນ III 5 ຫຼຽນ. ນອກຈາກນີ້, ຍັງໄດ້ຮັບຫຼຽນໄຊດາວຄຳ ແລະ ຫຼຽນໄຊ ໂຮ່ຈິມິນ ຂອງ ສສ.ຫວຽດນາມ; ພ້ອມກັນນັ້ນ, ຍັງໄດ້ຮັບຫຼຽນກຽດຕິຍົດລະດັບສູງ, ຫຼຽນກາ, ຫຼຽນກາລະນຶກ ຈາກທັງພາຍໃນ ແລະ ຕ່າງປະເທດ ຫຼາຍກວ່າ 22 ຫຼຽນ. ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ເປັນການສູນເສຍທີ່ໃຫຍ່ຫຼວງສຳລັບພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ, ເຮັດໃຫ້ພັກ-ລັດ ກໍຄືປະເທດເຮົາ ສູນເສຍພະນັກງານການນຳຂັ້ນສູງ, ການນຳຍຸດທະສາດທີ່ສຳຄັນໄປອີກສະຫາຍໜຶ່ງ ເຊິ່ງໄດ້ນຳເອົາຄວາມໂສກເສົ້າ, ເສຍດາຍ ແລະ ອາໄລອາວອນອັນສຸດຊຶ້ງໃຫ້ແກ່ພັກ-ລັດ ແລະ ຄອບຄົວ, ຍາດພີ່ນ້ອງ, ເພື່ອນມິດ ຜູ້ຢູ່ໃກ້ ແລະ ໄກ ຢ່າງຫາອັນປຽບບໍ່ໄດ້. ໃນເວລານາທີແຫ່ງຄວາມໂສກເສົ້າເສຍດາຍນີ້, ພວກເຮົາຂໍໃຫ້ຄຳໝັ້ນສັນຍາວ່າ: ຈະສືບຕໍ່ຢຶດໝັ້ນອຸດົມການ, ທາດແທ້ປະຕິວັດຂອງພັກເຮົາຢ່າງເດັດດ່ຽວໜຽວແໜ້ນ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນ ກໍຄືຄວາມສາມັກຄີເປັນປຶກແຜ່ນໃນທົ່ວປວງຊົນລາວທັງຊາດ ໃຫ້ນັບມື້ນັບແໜ້ນແຟ້ນ, ສືບຕໍ່ນຳພາພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເຮັດໃຫ້ວັດຖຸປະສົງສູງສຸດຂອງພັກ ແລະ ຄວາມມຸ່ງຫວັງຂອງປະຊາຊົນລາວບັນດາເຜົ່າ ກໍຄືຂອງສະຫາຍ ໄຊສົມພອນ ພົມວິຫານ ໃຫ້ປາກົດຜົນເປັນຈິງ; ພ້ອມນັ້ນ, ກໍຈະສືບຕໍ່ເບິ່ງແຍງຄອບຄົວ ແລະ ຊ່ວຍເຫຼືອກໍ່ສ້າງລູກຫຼານຂອງສະຫາຍ ເພື່ອສືບຕໍ່ປະກອບສ່ວນເຂົ້າໃນການປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກເຮົາສືບຕໍ່ໄປ. ສະຫາຍໄດ້ຈາກພວກເຮົາໄປຢ່າງບໍ່ມີວັນຈະກັບຄືນມາແລ້ວ, ແຕ່ພັກ-ລັດ, ພະນັກງານ, ສະມາຊິກພັກ ແລະ ປວງຊົນລາວທັງຊາດ ຈະຂໍຈົດຈຳຜົນງານ, ຄຸນງາມຄວາມດີຂອງສະຫາຍ ທີ່ໄດ້ອຸທິດໃຫ້ແກ່ພາລະກິດປະຕິວັດຕະຫຼອດໄລຍະ 50 ກວ່າປີທີ່ຜ່ານມານັ້ນ ໄວ້ຢ່າງບໍ່ມີວັນຫຼົງລືມ; ຊື່ສຽງຮຽງນາມ ແລະ ກຽດຕິຄຸນຂອງສະຫາຍ ໄດ້ຕິດພັນກັບໄລຍະປະຫວັດສາດຂອງຊາດລາວ ແລະ ພາລະກິດປະຕິວັດຂອງພັກເຮົາ ແລະ ຈະຝັງແໜ້ນຢູ່ໃນຄວາມຊົງຈຳຂອງພວກເຮົາຕະຫຼອດໄປ.

ຈາກນັ້ນ, ສະຫາຍ ສົນໄຊ ສີພັນດອນ... 





**ຜູ້ຊີ້ນຳ**

ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

**ຄະນະບັນນາທິການ**

ທ່ານ ບໍ ຫານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ